**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

**ກະຊວງພາຍໃນ** ເລກທີ 09/ພນ

ນະຄອນຫຼວງວຽງຈັນ, ວັນທີ 24 ສິງຫາ 2016

# ຄຳແນະນຳ
# ກ່ຽວກັບ ການສ້າງຕັ້ງ, ຍຸບເລີກ, ໂຮມເຂົ້າ, ແຍກອອກ ແລະ ປ່ຽນຊື່ບ້ານ

- **ອີງຕາມ** ກົດໝາຍວ່າດ້ວຍ ການປົກຄອງທ້ອງຖິ່ນ ສະບັບປັບປຸງ ເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015;
- **ອີງຕາມ** ດຳລັດວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງພາຍໃນ ສະບັບເລກທີ 253/ນຍ, ລົງວັນທີ 19 ສິງຫາ 2011.

ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດການສ້າງຕັ້ງ, ຍຸບເລີກ, ໂຮມເຂົ້າ, ແຍກອອກ ແລະ ປ່ຽນຊື່ບ້ານ ໃຫ້ມີຄວາມເຂົ້າໃຈເປັນເອກະພາບໃນຂອບເຂດທົ່ວປະເທດ, ລັດຖະມົນຕີກະຊວງພາຍໃນ ອອກຄຳແນະນຳ ດັ່ງນີ້:

## I. ຈຸດປະສົງ ແລະ ລະດັບຄາດໝາຍ

### 1. ຈຸດປະສົງ

- ເພື່ອກຳນົດຂັ້ນຕອນ ການສ້າງຕັ້ງ, ຍຸບເລີກ, ໂຮມເຂົ້າ, ແຍກອອກ ແລະ ປ່ຽນຊື່ບ້ານ;
- ເພື່ອເປັນບ່ອນອີງໃຫ້ແກ່ອົງການປົກຄອງທ້ອງຖິ່ນໃນການຄົ້ນຄວ້າ ແລະ ຈັດຕັ້ງປະຕິບັດຄຳແນະນຳສະບັບນີ້ ໃຫ້ສອດຄ່ອງກັບສະພາບການພັດທະນາເສດຖະກິດ,ວັດທະນະທຳ-ສັງຄົມຂອງທ້ອງຖິ່ນ.

### 2. ລະດັບຄາດໝາຍ

- ອົງການປົກຄອງບ້ານມີຄວາມໜັກແໜ້ນເຂັ້ມແຂງ;
- ບ້ານສາມາດຂຸດຄົ້ນ,ເສີມຂະຫຍາຍ, ນຳໃຊ້ທ່າແຮງບົ່ມຊ້ອນ ແລະ ມີກຳລັງແຮງໃຫ້ແກ່ການພັດທະນາ;
- ຕອບສະໜອງໄດ້ຄວາມຮຽກຮ້ອງຕ້ອງການຕົວຈິງຂອງປະຊາຊົນ ແລະ ການພັດທະນາເສດຖະກິດ-ສັງຄົມ.

## II. ທິດນຳ

ການຈັດຕັ້ງປະຕິບັດການສ້າງຕັ້ງ, ຍຸບເລີກ, ໂຮມເຂົ້າ, ແຍກອອກ ແລະ ປ່ຽນຊື່ບ້ານ ໃຫ້ປະຕິບັດຕາມທິດນຳ ດັ່ງນີ້:

1. ຖືກຕ້ອງຕາມລະບຽບ, ແນວທາງນະໂຍບາຍຂອງພັກ ແລະ ລັດຖະບານ;
2. ສອດຄ່ອງກັບຈຸດພິເສດ, ເງື່ອນໄຂ ແລະ ສະພາບການພັດທະນາ;

3. ຮັບປະກັນຄວາມເປັນເອກະພາບ;

4. ຮັກສາໄດ້ຄວາມສະຫງົບ ແລະ ຄວາມສາມັກຄີ.

## III. ເງື່ອນໄຂການສ້າງຕັ້ງ

ໃນການສ້າງຕັ້ງບ້ານຕ້ອງມີເງື່ອນໄຂຄົບຖ້ວນ ດັ່ງນີ້:

1. ທີ່ຕັ້ງພູມສາດເໝາະສົມແກ່ການປົກຄອງ;
2. ຈຳນວນພົນລະເມືອງ:
   - ບ້ານຢູ່ໃນຕົວເມືອງ ຕ້ອງມີພົນລະເມືອງຢ່າງໜ້ອຍ ໜຶ່ງພັນຄົນ;
   - ບ້ານຢູ່ເຂດທົ່ງພຽງ ຕ້ອງມີພົນລະເມືອງຢ່າງໜ້ອຍ ຫ້າຮ້ອຍຄົນ;
   - ບ້ານຢູ່ເຂດພູດອຍ ຕ້ອງມີພົນລະເມືອງຢ່າງໜ້ອຍ ສອງຮ້ອຍຄົນ;
3. ເງື່ອນໄຂພັດທະນາເສດຖະກິດ-ສັງຄົມໝັ້ນຄົງ.

## IV. ຂັ້ນຕອນ

### 1. ການສ້າງຕັ້ງ, ຍຸບເລີກ, ໂຮມເຂົ້າ, ແຍກອອກ

ການສ້າງຕັ້ງ, ຍຸບເລີກ, ໂຮມເຂົ້າ, ແຍກອອກ ແມ່ນປະຕິບັດ ດັ່ງນີ້:

1) ນາຍບ້ານສະເໜີ ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ກ່ຽວກັບຈຸດປະສົງ ໃນການສ້າງຕັ້ງ, ຍຸບເລີກ, ໂຮມເຂົ້າ, ແຍກອອກ ແລະ ບົດລາຍງານສະພາບທົ່ວໄປຂອງບ້ານ ໂດຍຜ່ານຫ້ອງການພາຍໃນ;
2) ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ແຕ່ງຕັ້ງຄະນະຮັບຜິດຊອບການສ້າງຕັ້ງ, ຍຸບເລີກ, ໂຮມເຂົ້າ, ແຍກອອກ ຕາມການຄົ້ນຄວ້າຂອງຫ້ອງການພາຍໃນ;
3) ຄະນະຮັບຜິດຊອບລົງເກັບກຳຂໍ້ມູນ ແລະ ເຮັດບົດວິພາກ ຊຶ່ງປະກອບມີ: ສະພາບທົ່ວໄປ, ເຫດຜົນ ຄວາມຈຳເປັນ, ຄວາມພ້ອມ, ຂໍ້ສະດວກ, ຂໍ້ຫຍຸ້ງຍາກ, ຜົນກະທົບດ້ານດີ, ຜົນກະທົບດ້ານອ່ອນ ແລະ ບັນຫາອື່ນໆ;
4) ຄະນະຮັບຜິດຊອບ ປະກອບສຳນວນເອກະສານ ດັ່ງນີ້:
   - ສຳນວນເອກະສານຂອງບ້ານ;
   - ໃບສະເໜີ ຫາ ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ;
   - ບົດວິພາກ.
5) ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ສະເໜີ ຫາ ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ຕົກລົງ.

### 2. ການປ່ຽນຊື່ບ້ານ

ການປ່ຽນຊື່ບ້ານ ແມ່ນປະຕິບັດ ດັ່ງນີ້:

1) ນາຍບ້ານສະເໜີ ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ໂດຍຜ່ານຫ້ອງການພາຍໃນ;
2) ຫ້ອງການພາຍໃນ ສົມທົບກັບ ບ້ານ ຄົ້ນຄວ້າ ແລະ ປະກອບສຳນວນເອກະສານ ຊຶ່ງສຳນວນເອກະສານ ປະກອບມີ:
   - ສຳນວນເອກະສານຂອງບ້ານ;

- ໃບສະເໜີ ແລະ ບົດລາຍງານຂອງຫ້ອງການພາຍໃນ ຫາ ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ.

3) ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ສະເໜີ ຫາ ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ຕົກລົງ.

## V. ການຈັດຕັ້ງປະຕິບັດ

- ມອບໃຫ້ກົມການປົກຄອງທ້ອງຖິ່ນ ກະຊວງພາຍໃນ ເປັນເຈົ້າການໃນການຈັດຕັ້ງ ເຜີຍແຜ່, ເຊື່ອມຊຶມ ແນະນຳ, ຕິດຕາມ ແລະ ກວດກາຜົນການຈັດຕັ້ງປະຕິບັດ ຄຳແນະນຳສະບັບນີ້ ໃຫ້ໄດ້ຮັບຜົນດີ;
- ອົງການປົກຄອງທ້ອງຖິ່ນແຕ່ລະຂັ້ນເຜີຍແຜ່, ເຊື່ອມຊຶມ ແລະ ຈັດຕັ້ງປະຕິບັດ ໃຫ້ເປັນເອກະພາບກັນ.

ລັດຖະມົນຕີ

ຄຳໝັ້ນ ສູນວິເລີດ